## ພັນທະດ້ວຍຄວາມສະໝັກໃຈສໍາລັບທຸລະກິດກະສິກໍາທີ່ມີຄວາມຮັບຜິດຊອບ ໃນ ສປປ ລາວ

ບັນດາພັນທະດ້ວຍຄວາມສະໝັກໃຈທີ່ໄດ້ຖືກສະເໜີເຫລົ່ານີ້ປະກອບດ້ວຍຫລາຍມາດຕະຖານທີ່ບັນດາວິສາຫະກິດ[1] ທີ່ດໍາເນີນທຸລະກິດພາຍໃນ ສປປ ລາວ (ລາວ) ຄວນປະຕິບັດຕາມ ເພື່ອສ້າງຕ່ອງໂສ້ຂອງມູນຄ່າຜະລິດຕະພັນກະສິກໍາແບບມີຄວາມຮັບຜິດຊອບ. ພັນທະເຫລົ່ານີ້ເປັນການປະຕິບັດຕາມ ຄູ່ມື OECD-FAO ທີ່ໄດ້ເຜີຍແຜ່ອອກໃນ ປີ 2016[2] ແລະ ກໍ່ແມ່ນໝາກຜົນຂອງໜ່ວຍງານສະເພາະກິດທີ່ປະກອບດ້ວຍຫລາຍສະມາຊິກຂອງກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ[3] (LIWG). ພັນທະເຫລົ່ານີ້ ປະກອບມີຫລາຍມາດຕະຖານສາກົນ ສໍາລັບ ຕ່ອງໂສ້ຂອງມູນຄ່າຜະລິດຕະພັນກະສິກໍາແບບມີຄວາມຮັບຜິດຊອບ.

ຈຸດປະສົງຂອງເອກະສານສະບັບນີ້ ແມ່ນເພື່ອສະໜອງກອບຄໍາແນະນໍາສໍາລັບບັນດາວິສາຫະກິດຜູ້ທີ່ຈະເລີ່ມຕົ້ນ ຮ່ວມມືກັບສະມາຊິກຂອງ LIWG. ພັນທະດ້ວຍຄວາມສະໝັກໃຈມີເປົ້າໝາຍຕົ້ນຕໍໃສ່ບັນດາວິສາຫະກິດ ທີ່ເຮັດການລົງທຶນ ໂດຍມີການນໍາໃຊ້ທີ່ດິນ ໂດຍສະເພາະແມ່ນທຸລະກິດກະສິກໍາ ໃຫ້ເປັນຜູ້ທີ່ມີຄວາມຮັບຜິດຊອບ ໃນການຄຸ້ມຄອງດິນ ລວມທັງການຮັບຜິດຊອບຕໍ່ການລົງທຶນ ເຊິ່ງແມ່ນເປົ້າໝາຍອັນໜຶ່ງຂອງບັນດາສະມາຊິກຂອງ LIWG. ບັນດາວິສາຫະກິດຜູ້ທີ່ກໍາລັງດໍາເນີນທຸລະກິດ ທີ່ມີຄວາມຮັບຜິດຊອບທາງສັງຄົມ ແລະ ສິ່ງແວດລ້ອມ ທີ່ເຮັດວຽກຮ່ວມກັບບັນດາສະມາຊິກຂອງ LIWG ກໍ່ສາມາດໄດ້ຮັບຜົນປະໂຫຍດ ຈາກການປະຕິບັດຕາມບັນດາພັນທະ ດັ່ງທີ່ກໍານົດໄວ້ຢູ່ໃນເອກະສານສະບັບນີ້ ເພື່ອຫລຸດຜ່ອນຄວາມສ່ຽງທາງທຸລະກິດຂອງພວກເຂົາ, ເພື່ອຫລີກເວັ້ນການຊັກຊ້າຂອງໂຄງການ, ເພື່ອຮັບປະກັນຄວາມຍືນຍົງ ແລະ ເພື່ອປັບປຸງການມີສ່ວນຮ່ວມລະຫວ່າງຊຸມຊົນ ແລະ ວິສາຫະກິດ.

ບັນດາວິສາຫະກິດຄວນປະຕິບັດຕາມບັນດານະໂຍບາຍແຫ່ງຊາດ, ກົດໝາຍ, ລະບຽບການ, ຂໍ້ກໍານົດຕ່າງໆ ແລະ ບັນດາມາດຕະຖານ: ຮູບແບບ ທີ່ໄດ້ນໍາສະເໜີໄປແລ້ວນັ້ນບໍ່ໄດ້ມີຈຸດປະສົງເພື່ອແກ້ໄຂສິ່ງເຫລົ່ານີ້. ຄວນມີການດັດແກ້ໂດຍອີງຕາມສະພາບການ ທີ່ບັນດາວິສາຫະກິດກໍາລັງດໍາເນີນງານຢູ່.

ບັນດາສະມາຊິກ LIWG ຄວນແລກປ່ຽນຂໍ້ມູນ, ສົນທະນາ ແລະ ສົ່ງເສີມພັນທະດ້ວຍຄວາມສະໝັກໃຈກັບບັນ ດາບໍລິສັດເອກະຊົນ ແລະ ພາກສ່ວນກ່ຽວຂ້ອງ (ອົງການຈັດຕັ້ງຊາວກະສິກອນ, ຊຸມຊົນ, ອົງການຈັດຕັ້ງທາງສັງຄົມ, ສໍານັກງານ ຂອງພາກລັດຖະບານ, ສໍານັກງານອົງການທີ່ບໍ່ສັງກັດລັດ, ສະພາການຄ້າ, ແລະ ອື່ນໆ). ບັນດາວິສາຫະກິດອາດຈະບໍ່ນໍາໃຊ້ LIWG ຫລື ຍີ່ຫໍ້ສິນຄ້າຂອງບັນດາສະມາຊິກ ເພື່ອເຮັດການສົ່ງເສີມຜະລິດຕະພັນ ແລະ ການບໍລິການ ຂອງຕົນ ນອກຈາກຈະໄດ້ຮັບການເຫັນດີເທົ່ານັ້ນ. ບັນດາພັນທະດ້ວຍຄວາມສະ ໝັກໃຈເຫລົ່ານີ້ເປັນເອກະສານຊີ້ນໍາອັນໜຶ່ງຂອງ LIWG ເຊິ່ງໄດ້ຖືກເຫັນດີຮັບຮອງເອົາ ໂດຍບັນດາສະມາຊິກຂອງເຄືອຂ່າຍ ຂອງ LIWG ທີ່ໄດ້ປະສານສົມທົບກັບຂະແໜງເອກະຊົນແລ້ວ.

---

[1] 'ວິສາຫະກິດ' ໃນເອກະສານສະບັບນີ້ໝາຍເຖິງທຸກປະເພດວິສາຫະກິດໃນຂະແໜງເອກະຊົນທີ່ດໍາເນີນທຸລະກິດໃນ ສປປ ລາວ, ລວມທັງບໍລິສັດຕ່າງປະເທດ, ບໍລິສັດພາຍໃນປະເທດ, ລັດວິສາຫະກິດ, ວິສາຫະກິດຂະໜາດນ້ອຍ-ຂະໜາດກາງ, ແລະ ອື່ນໆ.

[2] OECD/FAO (2016), OECD-FAO ຄໍາແນະນໍາສໍາລັບການສ້າງມູນຄ່າຜະລິດຕະພັນກະສິກໍາ ແບບຕ່ອງໂສ້ຢ່າງມີຄວາມຮັບຜິດຊອບ ຈັດພິມໂດຍ OECD, Paris. http://dx.doi.org/10.1787/9789264251052-en

[3] ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ແມ່ນເຄືອຄ່າຍອັນໜຶ່ງຂອງຫລາຍອົງການຈັດຕັ້ງທາງສັງຄົມ ຊຶ່ງມີຫລາຍກວ່າ 80 ສະມາຊິກຫລັກ ແລະ ມີຫລາຍກວ່າ 180 ສະມາຊິກສະໜັບສະໜູນ. ວິໄສທັດຂອງເຄືອຄ່າຍດັ່ງກ່າວແມ່ນເພື່ອເຮັດໃຫ້ບັນດາຊຸມຊົນເຂົ້າເຖິງການນໍາໃຊ້ທີ່ດິນທີ່ມີຄວາມຮັບປະກັນ ແລະ ມີສິດນໍາໃຊ້ຢ່າງສະເໝີພາບ ໂດຍໃຫ້ມີນະໂຍບາຍທີ່ເປັນທໍາ ແລະ ເພື່ອໝົດທຸກຄົນ ແລະ ມີການຈັດຕັ້ງປະຕິບັດນະໂຍບາຍ ຢ່າງມີຄວາມໂປ່ງໃສ ແລະມີການຕັດສິນບັນຫາການຄຸ້ມຄອງທີ່ດິນຢ່າງມີຂໍ້ມູນ ເພື່ອຮັບປະກັນຄວາມຍືນຍົງ.

ການນຳໃຊ້ຄຳວ່າ "***ພວກເຮົາ***" ສະແດງໃຫ້ເຫັນການມີພັນທະຂອງຕົນເອງ ຂອງບັນດາວິສາຫະກິດ[4].

1. ມາດຕະຖານການດຳເນີນທຸລະກິດທີ່ມີຄວາມຮັບຜິດຊອບທີ່ກ່ຽວຂ້ອງກັບຫລາຍດ້ານ

***ການປະເມີນຜົນກະທົບ***

ພວກເຮົາຈະສືບຕໍ່ປະເມີນວ່າ ບັນດາກິດຈະກຳຂອງພວກເຮົາຈະບໍ່ສົ່ງຜົນສະທ້ອນໃນທາງບໍ່ດີຕໍ່ບັນດາຊຸມຊົນ ແລະ ຕໍ່ການດຳລົງຊີວິດຂອງຊຸມຊົນ, ຕໍ່ບັນດາໂອກາດການຕະຫລາດ, ຕໍ່ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ, ຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ດ້ານໂພຊະນາການ. ພວກເຮົາປະຕິບັດພັນທະຂອງພວກເຮົາໂດຍທີ່ວ່າ ການປະເມີນຜົນກະທົບຄວນປະຕິບັດຢ່າງຮອບດ້ານ ແລະ ຊັດເຈນ ແລະ ຄວນນຳເອົາຕົວແທນຂອງທຸກ ພາກສ່ວນ ທີ່ກ່ຽວຂ້ອງເຂົ້າຮ່ວມນຳ.

***ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ***

ພວກເຮົາຈະໃຊ້ຄວາມພະຍາຍາມເພື່ອຮັບປະກັນວ່າການປະຕິບັດງານຂອງພວກເຮົາຈະບໍ່ສົ່ງຜົນກະທົບໃນທາງລົບຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການຂອງບັນດາຊຸມຊົນ ແລະ ຈະຮັບປະກັນວ່າການປະຕິບັດງານຂອງພວກເຮົາຈະບໍ່ສ້າງອຸປະສັກໃນດ້ານການເຂົ້າເຖິງຂອງຊຸມຊົນດ້ານອາຫານ ແລະ ການເຂົ້າເຖິງທີ່ດິນທີ່ພາໃຫ້ເກີດຜົນປະໂຫຍດໄດ້.

***ການສະໜອງຂໍ້ມູນ***

ພວກເຮົາຈະສະໜອງຂໍ້ມູນໃຫ້ແກ່ບັນດາຊຸມຊົນ ເຊິ່ງກ່ຽວຂ້ອງກັບຜົນປະໂຫຍດ, ຜົນກະທົບ ແລະ ຄວາມສ່ຽງ ທີ່ອາດຈະເກີດຂຶ້ນຈາກການປະຕິບັດວຽກງານຂອງພວກເຮົາ, ແລະ ຈະອະທິບາຍກ່ຽວກັບບັນດາມາດຕະການຂອງພວກເຮົາໃນການຫລຸດຜ່ອນຜົນກະທົບ ໂດຍສະເພາະຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ສິດທິມະນຸດ ໃຫ້ແກ່ບັນດາຊຸມຊົນ ທີ່ອາດຈະໄດ້ຮັບຜົນກະທົບ. ຂໍ້ມູນທີ່ສະໜອງໃຫ້ແກ່ບັນດາຊຸມຊົນຕ້ອງໃຫ້ສອດຄ່ອງກັບວັດທະນະທຳ ແລະ ພາສາ ເພື່ອໃຫ້ສະມາຊິກທຸກຄົນຂອງຊຸມຊົນທີ່ກ່ຽວຂ້ອງ ໃຫ້ສາມາດເຂົ້າໃຈເນື້ອໃນ ແລະ ສາມາດຕັດສິນບັນຫາໄດ້ແບບມີຂໍ້ມູນຢ່າງຖືກຕ້ອງ.

ພວກເຮົາຍິນດີຮັບເອົາການສະໜັບສະໜູນຈາກບັນດາສະມາຊິກ ຂອງ LIWG ເພື່ອອຳນວຍຄວາມສະດວກໃນການສະໜອງຂໍ້ມູນດັ່ງກ່າວນີ້.

***ການປຶກສາຫາລື***

ພວກເຮົາຈະຈັດກອງປະຊຸມປຶກສາຫາລືກັບບັນດາຊຸມຊົນ ລວມທັງແມ່ຍິງ, ບັນດາກຸ່ມຊົນເຜົ່າ ແລະ ກຸ່ມໄວໜຸ່ມໃນໄລຍະກ່ອນ ແລະ ໄລຍະກຳລັງປະຕິບັດວຽກງານທີ່ອາດສົ່ງຜົນກະທົບຕໍ່ພວກເຂົາ. ພວກເຮົາຈະຄຳນຶງເຖິງບັນ ດາຄວາມສ່ຽງ ແລະ ອຸປະສັກ ທີ່ແມ່ຍິງ ແລະ ຜູ້ຊາຍຈະປະເຊີນໜ້າ.

ພວກເຮົາຈະປະຕິບັດພັນທະຕໍ່ບັນດາຫລັກການ ຂອງການຍິນຍອມດ້ວຍຄວາມສະໝັກໃຈ, ແລະ ການຮັບຮູ້ລ່ວງໜ້າ (FPIC)[5].

***ການແບ່ງປັນຜົນປະໂຫຍດ***

ພວກເຮົາຈະຮັບປະກັນວ່າການປະຕິບັດວຽກງານຂອງພວກເຮົາ ຕ້ອງເປັນການປະກອບສ່ວນໃຫ້ແກ່ການພັດທະນາ ແບບຍືນຍົງ ແລະ ການພັດທະນາຊົນນະບົດ ທີ່ກວມເອົາໝົດທຸກຄົນ ລວມທັງ, ໂດຍອີງຕາມຄວາມເໝາະສົມ, ການສົ່ງເສີມການ

---

[4] ບັນດາວິສາຫະກິດ ທີ່ຢາກເຮັດວຽກຮ່ວມກັບສະມາຊິກຂອງ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ບໍ່ຈຳເປັນຕ້ອງປະຕິບັດພັນທະທັງໝົດກໍ່ໄດ້, ແຕ່ຫາກວ່າບັນດາວິສາຫະກິດເຫຼົ່ານີ້ຕ້ອງໄດ້ສືບຕໍ່ປະຕິບັດດ້ວຍຄວາມສັດຊື່ເພື່ອບັນລຸທຸກພັນທະທີ່ມີຢູ່ໃນຕົວແບບນີ້.

[5] ຫລັກການຂອງ FPIC: ການປຶກສາຫາລືແມ່ນຂະບວນການທີ່ຕໍ່ເນື່ອງ ດ້ວຍການສື່ສານສອງທິດທາງ ແລະ ຊອກຫາຄຳຍິນຍອມແບບລວມໝູ່ຢ່າງກວ້າງຂວາງ ຈາກຊາວບ້ານຜູ້ທີ່ໄດ້ຮັບຜົນກະທົບ *ກ່ອນ* ທີ່ໂຄງການຈະດຳເນີນໄດ້.

ແບ່ງປັນຜົນປະໂຫຍດ ທີ່ເປັນເງິນ ແລະ ບໍ່ເປັນເງິນຢ່າງເປັນທໍາ ແລະ ເທົ່າທຽມກັນກັບບັນດາຊຸມຊົນທີ່ໄດ້ຮັບຜົນກະທົບ ໂດຍອີງຕາມເງື່ອນໄຂທີ່ໄດ້ເຫັນດີ ເຊິ່ງກັນ ແລະ ກັນ.

### *ກົນໄກການແກ້ໄຂການຮ້ອງທຸກ*

ພວກເຮົາຈະຮັບປະກັນໃຫ້ມີກົນໄກອັນໜຶ່ງ ທີ່ດໍາເນີນການໄດ້ດີກ່ອນໂຄງການລົງທຶນຈະເລີ່ມຕົ້ນທີ່ໃຫ້ໂອກາດແກ່ບັນດາຊຸມຊົນທີ່ໄດ້ຮັບຜົນກະທົບໃຫ້ສະແດງຄໍາຄິດເຫັນ ແລະ ສະເໜີປະເດັນຄວາມຫ່ວງໃຍຂອງພວກເຂົາໂດຍກົງຕໍ່ຜູ້ຕາງໜ້າວິສາຫະກິດຂອງພວກເຮົາ ຫລື ຕໍ່ ອໍານາດການປົກຄອງທີ່ກ່ຽວຂ້ອງ. ສໍາລັບການແກ້ໄຂການຮ້ອງທຸກ ທີ່ກ່ຽວຂ້ອງກັບການປະຕິບັດງານ ຂອງວິສາຫະກິດຂອງພວກເຮົາ, ພວກເຮົາຈະຈັດຕັ້ງໃຫ້ມີຂະບວນການໄກ່ເກ່ຍ ຫລື ຂະບວນການແກ້ໄຂການຮ້ອງທຸກອັນໜຶ່ງຂຶ້ນມາໂດຍບໍ່ເສຍຄ່າບໍລິການ ເພື່ອໃຫ້ປະຊາຊົນທຸກຄົນທີ່ໄດ້ຮັບຜົນກະທົບຈາກການປະຕິບັດວຽກງານຂອງພວກເຮົາ ສາມາດເຂົ້າເຖິງຂະບວນການດັ່ງກ່າວນີ້ໄດ້.

ພວກເຮົາຈະໃຫ້ຂໍ້ມູນຢ່າງພຽງພໍແກ່ບັນດາຊຸມຊົນກ່ຽວກັບຂະບວນການແກ້ໄຂການຮ້ອງທຸກ, ແລະ ຮູບແບບວິທີການຈະເຂົ້າເຖິງບັນດາກົນໄກເຫລົ່ານີ້ໄດ້ຄືແນວໃດ.

### *ຄວາມກ້າວໜ້າຂອງແມ່ຍິງ*

ພວກເຮົາຈະຮັບປະກັນວ່າຢູ່ພາຍໃນວຽກງານຂອງພວກເຮົາຈະບໍ່ໃຫ້ມີການຈໍາແນກແມ່ຍິງ. ພວກເຮົາຈະພະຍາຍາມສົ່ງເສີມການມີສ່ວນຮ່ວມຢ່າງມີຄວາມໝາຍ ຂອງແມ່ຍິງ ໃນການຕັດສິນບັນຫາ ແລະ ໃນບົດບາດ ການນໍາພາ, ຮັບປະກັນໃຫ້ມີການພັດທະນາທາງດ້ານວິຊາການ ແລະ ມີຄວາມກ້າວໜ້າ, ແລະ ອໍານວຍຄວາມສະດວກໃຫ້ແກ່ການເຂົ້າເຖິງຢ່າງສະເໝີພາບ ຂອງແມ່ຍິງ ແລະ ໃນການຄຸ້ມຄອງບັນດາແຫລ່ງຊັບພະຍາກອນທໍາມະຊາດ, ປັດໃຈນໍາເຂົ້າ, ເຄື່ອງມືການຜະລິດ, ການບໍລິການດ້ານການໃຫ້ຄໍາປຶກສາ ແລະ ດ້ານການເງິນ, ການຝຶກອົບຮົມ, ການຕະຫລາດ ແລະ ຂໍ້ມູນຂ່າວສານ.

## 2. ການປົກປ້ອງສິດທິຂອງບຸກຄົນ

### *ສິດທິມະນຸດ*

ພວກເຮົາຈະປະຕິບັດຕາມກອບວຽກຂອງບັນດາພັນທະດ້ານສິດທິມະນຸດ[6] ຂອງສາກົນ ລວມທັງບັນດາກົດໝາຍ ແລະ ລະບຽບຫລັກການພາຍໃນ ຂອງ ສປປ ລາວ.

### *ສິດທິທາງດ້ານແຮງງານ*

ພວກເຮົາຈະປະຕິບັດຕາມບັນດາກົດໝາຍ ແລະ ລະບຽບການທາງດ້ານແຮງງານ ແລະ ບັນດາມາດຕະຖານທາງດ້ານແຮງງານຂອງສາກົນ ໃນການປະຕິບັດວຽກງານຂອງພວກເຮົາ, ເວົ້າສະເພາະແມ່ນສິດເສລີພາບ ຂອງສະມາ ຄົມ ແລະ ສິດໃນການຕໍ່ລອງແບບລວມໝູ່, ການລຶບລ້າງແຮງງານທີ່ຖືກບັງຄັບ ແລະ ແຮງງານເດັກ, ແລະ ການລຶບລ້າງການຈໍາແນກໃນລະຫວ່າງບັນດາຄົນງານ.

ໃນການປະຕິບັດງານຂອງພວກເຮົາ ພວກເຮົາຍັງຈະ:

- ຮັບປະກັນໃຫ້ມີສະຖານທີ່ເຮັດວຽກ ແລະ ເງື່ອນໄຂການເຮັດວຽກ ທີ່ຖືກຫລັກການຮັກສາອະນາໄມ ແລະ ຫລັກການຄວາມປອດໄພ, ໂດຍເອົາໃຈໃສ່ແມ່ຍິງ;

---

[6] ຖະແຫລງການສາກົນວ່າດ້ວຍສິດທິມະນຸດ (UDHR) ໄດ້ຖືກປະກາດໃຊ້ໂດຍ ສະມັດຊາໃຫຍ່ ຂອງອົງການສະຫະປະຊາຊາດ ທີ່ນະຄອນປາຣີ ໃນວັນທີ 10 ທັນວາ 1948 (ມະຕິຂອງສະມັດຊາໃຫຍ່ ເລກທີ 217 A) ຊຶ່ງເປັນມາດຕາຖານລວມ ທີ່ຕ້ອງໄດ້ປະຕິບັດສໍາລັບໝົດທຸກຄົນ ແລະ ທຸກປະເທດ.

- ຮັບປະກັນໃຫ້ມີຄ່າແຮງງານທີ່ເໝາະສົມ ແລະ ເປັນທຳ[7], ຮັບປະກັນຜົນປະໂຫຍດ ແລະ ເງື່ອນໄຂການເຮັດວຽກ ທີ່ພຽງພໍ ໃນການຕອບສະໜອງກັບຄວາມຕ້ອງການຂັ້ນພື້ນຖານຂອງຄົນງານ ແລະ ຄອບຄົວ ຂອງພວກເຂົາ;
- ຮັບຮອງເອົາວິທີການ, ມາດຕະການ ແລະ ຂະບວນການວຽກງານທີ່ເປັນການສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງ ຢ່າງມີຄວາມໝາຍໃນການຕັດສິນບັນຫາ ແລະ ໃນບົດບາດການນຳພາ;
- ຮັບປະກັນການປະຕິບັດຕໍ່ພະນັກງານທັງໝົດດ້ວຍຄວາມເປັນທຳ.

ພວກເຮົາຈະປະກອບສ່ວນໃນການປະຕິບັດສິດທິໃນການເຮັດວຽກ ໂດຍການ:

- ພະຍາຍາມເພີ່ມໂອກາດການຈ້າງງານໃຫ້ຫລາຍຂຶ້ນ;
- ຮັບປະກັນໃຫ້ມີການຝຶກອົບຮົມ ແລະ ຖ່າຍທອດຄວາມຮູ້ໃຫ້ແກ່ພະນັກງານ ເພື່ອຕອບສະໜອງຄວາມຕ້ອງການ ຂອງວິສາຫະກິດ ແລະ ການພັດທະນາບຸກຄະລາກອນ;
- ສົ່ງເສີມການເຂົ້າເຖິງວຽກເຮັດງານທຳ ແລະ ໂອກາດສ້າງລາຍຮັບສຳລັບຊາວໜຸ່ມ[8] ແລະ ຜູ້ພິການ ໂດຍອີງຕາມ ຄວາມເໝາະສົມ;
- ຮັບປະກັນການປົກປ້ອງແມ່ຍິງທີ່ເກີດລູກໃນໄລຍະການເຮັດວຽກ.

### *ສຸຂະພາບ ແລະ ຄວາມປອດໄພ*

ພວກເຮົາຈະສົ່ງເສີມສຸຂະພາບສາທາລະນະສຸກ ໂດຍການ :

- ສົ່ງເສີມວິທີການປະຕິບັດທີ່ເໝາະສົມເພື່ອປ້ອງກັນໄພຂົ່ມຂູ່ຕໍ່ຊີວິດມະນຸດ, ສຸຂະພາບ ແລະ ສະຫວັດດີການໃນ ການປະຕິບັດວຽກງານຂອງພວກເຮົາ ລວມທັງໄພອັນຕະລາຍທີ່ເກີດມາຈາກການບໍລິໂພກ, ການຊົມໃຊ້ ຫລື ການ ຈຳກັດວັດຖຸສິ່ງຂອງ ແລະ ເຄື່ອງຮັບໃຊ້ໃນການບໍລິການ;
- ປະກອບສ່ວນເຂົ້າໃນການປົກປ້ອງສຸຂະພາບ ແລະ ຄວາມປອດໄພຂອງບັນດາຊຸມຊົນ ທີ່ເຂົ້າຮ່ວມວຽກງານຂອງ ພວກເຮົາ ລວມທັງການຝຶກອົບຮົມກ່ຽວກັບການນຳໃຊ້ອຸປະກອນ ຫລື ສານເຄມີ ທີ່ເປັນອັນຕະລາຍ.

## 3. ສິດໃນການນຳໃຊ້ທີ່ດິນ ແລະ ການເຂົ້າເຖິງຊັບພະຍາກອນທຳມະຊາດ

ພວກເຮົາຈະເຄົາລົບຜູ້ມີສິດຄອບຄອງທີ່ດິນຢ່າງຖືກກົດໝາຍ[9] ແລະ ສິດໃນການເຂົ້າເຖິງການຊົມໃຊ້ຊັບພະຍາກອນທຳມະຊາດ ລວມທັງສິດຂອງລັດ, ເອກະຊົນ, ຊຸມຊົນ, ລວມໝູ່, ກຸ່ມຊົນເຜົ່າ ແລະ ສິດການຄອບຄອງຕາມປະເພນີ ທີ່ອາດຈະຖືກ ຜົນກະທົບຈາກກິດຈະກຳຂອງພວກເຮົາ. ຊັບພະຍາກອນທຳມະຊາດປະກອບດ້ວຍດິນ, ການປະມົງ, ປ່າໄມ້ ແລະ ນ້ຳ.

ພວກເຮົາຈະປະຕິບັດພັນທະທາງດ້ານຄວາມໂປ່ງໃສ ແລະ ມີການເປີດເຜີຍຂໍ້ມູນເຊິ່ງກ່ຽວຂ້ອງກັບການລົງທຶນທີ່ນຳໃຊ້ທີ່ດິນ ລວມທັງຄວາມໂປ່ງໃສ ຂອງເນື້ອໃນສັນຍາ ສຳລັບການເຊົ່າ ຫລື ການສຳປະທານ ໂດຍການເຄົາລົບຄວາມເປັນສ່ວນຕົວ.

ພວກເຮົາຮັບຮູ້ວ່າ ປະຊາຊົນຜູ້ທີ່ກ່ຽວຂ້ອງ ກໍມີສິດໃນການຄັດເລືອກ ຫລື ປະຕິເສດ ຕໍ່ການສະເໜີການນຳໃຊ້ທີ່ດິນ.

---

[7] ອີງຕາມກົດໝາຍວ່າດ້ວຍແຮງງານ ຂອງລາວ ແລະ ເອກະສານທີ່ກ່ຽວຂ້ອງຕ່າງໆ ຂອງລັດຖະບານ ກ່ຽວກັບຄ່າແຮງງານຂັ້ນຕໍ່າສຸດ.

[8] ຊາວໜຸ່ມ ໝາຍເຖິງທຸກຄົນທີ່ມີອາຍຸ ລະຫວ່າງ 18 ຫາ 25 ປີ.

[9] ໂດຍບໍ່ກຳນົດວ່າພວກເຂົາມີໃບຕາດິນ, ເອກະສານ ຫລືບໍ່ກໍ່ຕາມ, ສິດຄອບຄອງທີ່ດິນຕາມປະເພນີຂອງຊຸມຊົນ ແມ່ນຕ້ອງຖືກຮັບຮູ້.

ໃນເມື່ອຜູ້ຄອບຄອງສິດນຳໃຊ້ທີ່ດິນຢ່າງຖືກກົດໝາຍໄດ້ຮັບຜົນກະທົບໃນທາງລົບ, ພວກເຮົາຈະຮັບປະກັນວ່າ ພວກເຂົາຕ້ອງໄດ້ຮັບການຊົດເຊີຍລ່ວງໜ້າດ້ວຍມູນຄ່າທີ່ເຕັມສ່ວນ ແລະ ຍຸຕິທຳ ສຳລັບປະຊາຊົນທີ່ ສິດຄອບຄອງການນຳໃຊ້ທີ່ດິນຂອງພວກເຂົາໄດ້ຮັບຜົນກະທົບໃນທາງລົບ ຈາກການປະຕິບັດງານຂອງພວກເຮົາ.

## 4. ການປົກປ້ອງສິ່ງແວດລ້ອມ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ

ໂດຍການປະສານປະງານກັບບັນດາສຳນັກງານທີ່ມີຄວາມຮັບຜິດຊອບຂອງພາກສ່ວນລັດຖະບານ ແລະ ຜູ້ມີສ່ວນຮ່ວມອື່ນໆຕາມຄວາມເໝາະສົມ, ພວກເຮົາຈະສ້າງຕັ້ງ ແລະ ຮັກສາຮູບແບບການປະຕິບັດວຽກງານທີ່ເປັນການປະຕິບັດຕາມລະບົບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ແບບຍືນຍົງ.

ພວກເຮົາຈະປັບປຸງການປະຕິບັດງານດ້ານສິ່ງແວດລ້ອມຂອງພວກເຮົາຢ່າງຕໍ່ເນື່ອງ ໂດຍການ:

- ປ້ອງກັນ, ຈຳກັດ ແລະ ແກ້ໄຂບັນຫາມົນລະພິດ ແລະ ຜົນກະທົບໃນທາງລົບຕໍ່ອາກາດ, ທີ່ດິນ, ຂີ້ດິນ, ນ້ຳ, ປ່າໄມ້ ແລະ ຊີວະນາໆພັນ;
- ຈຳກັດການນຳໃຊ້ສານເຄມີທີ່ເປັນພິດ;
- ຮັບປະກັນການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ເພີ່ມປະສິດທິພາບໃນການນຳໃຊ້ຊັບພະຍາກອນ;
- ນຳໃຊ້ຊັບພະຍາກອນນ້ຳ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງສຸດ ໂດຍບໍ່ສົ່ງຜົນກະທົບຕໍ່ຊຸມຊົນ ໃນທ້ອງຖິ່ນໃນດ້ານຄວາມຕ້ອງການ ຕໍ່ກັບການນຳໃຊ້ນ້ຳຂອງພວກເຂົາ;
- ສົ່ງເສີມການກະສິກຳທີ່ດີ ລວມທັງການບຳລຸງຮັກສາ ຫລື ການປັບປຸງຄວາມອຸດົມສົມບູນຂອງດິນ ແລະ ຫລີກເວັ້ນການເສາະເຈື່ອນຂອງດິນ;
- ສະໜັບສະໜູນ ແລະ ອະນຸລັກຊີວະນາໆພັນ;
- ເຄົາລົບລະບຽບການຂອງເຂດປ່າປ້ອງກັນ.

## 5. ການຮັກສາສັດ

ພວກເຮົາຈະສະໜັບສະໜູນການຮັກສາສັດຢູ່ໃນການປະຕິບັດວຽກງານຂອງພວກເຮົາ ລວມທັງ :

- ການໃຊ້ຄວາມພະຍາຍາມເພື່ອຮັບປະກັນວ່າ “ຫ້າ ອິດສະລະພາບ“ ສຳລັບການຮັກສາສັດໄດ້ຖືກຈັດຕັ້ງປະຕິບັດ, ຕົວຢ່າງ ອິດສະລະພາບຈາກຄວາມອຶດຫິວ, ຈາກການຂາດນ້ຳດື່ມ ແລະ ຈາກການຂາດໂພຊະນາການ, ຈາກຄວາມບໍ່ສະດວກທາງຮ່າງກາຍ ແລະ ທາງດ້ານອຸນຫະພູມຄວາມຮ້ອນ, ຈາກຄວາມເຈັບປວດ, ຈາກການຖືກບາດເຈັບ ແລະ ການເກີດພະຍາດ, ຄວາມຢ້ານກົວ ແລະ ຄວາມໂສກເສົ້າ, ແລະ ອິດສະລະພາບໃນການ ສະແດງອອກດ້ານພຶດຕິກຳ ທີ່ເປັນປົກກະຕິ.

## 6. ການເຄົາລົບຫລັກການຂອງກົດໝາຍ

ພວກເຮົາຈະປ້ອງກັນ ແລະ ຫລີກເວັ້ນທຸກຮູບແບບຂອງການສໍ້ລາດບັງຫລວງ ແລະ ການສໍ້ໂກງ.

ພວກເຮົາຈະປະຕິບັດຕາມຂໍ້ກຳນົດ ແລະ ເນື້ອໃນຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ລະບຽບການຕ່າງໆຂອງ ສປປ ລາວ.

ພວກເຮົາຈະປະຕິບັດຕາມ ບັນດາຂໍ້ແນະນຳ ແລະ ລະບຽບການທີ່ມີຢູ່ໃນປະຈຸບັນ ຫລື ໃນອະນາຄົດ ທີ່ລັດຖະບານສົ່ງເສີມ ເຊິ່ງກ່ຽວຂ້ອງກັບການກະສິກຳແບບມີສັນຍາ, ອີງການຈັດຕັ້ງຂອງຊາວກະສິກອນ, ສິດໃນການຄອບຄອງທີ່ດິນ, ແລະ ອື່ນໆ.

## 7. ການຕິດຕາມ

ພວກເຮົາຈະມີສ່ວນຮ່ວມກັບ LIWG ແລະ ສະມາຊິກຂອງກຸ່ມດັ່ງກ່າວ ໃນຂະບວນການຮຽນຮູ້ຮ່ວມກັນເພື່ອອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ການຕິດຕາມບັນດາພັນທະດ້ວຍຄວາມສະໝັກໃຈເຫລົ່ານີ້.

## ເອກະສານຊ້ອນທ້າຍ

**ສຳລັບຂໍ້ມູນເພີ່ມເຕີມ ກະລຸນາເບິ່ງໃນເອກະສານຂ້າງລຸ່ມນີ້:**


ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ, 2016.

ດຳລັດຂອງນາຍົກລັດຖະມົນຕີ ເລກທີ 84 ວ່າດ້ວຍການຊົດເຊີຍ ແລະ ການຍົກຍ້າຍຈັດສັນ ຈາກໂຄງການພັດທະນາ, ສຳນັກງານນາຍົກລັດຖະມົນຕີ, 2016.

ຂໍ້ແນະນຳແບບສະໝັກໃຈກ່ຽວກັບການຄຸ້ມຄອງສິດການນຳໃຊ້ທີ່ດິນທີ່ມີຄວາມຮັບຜິດຊອບ, ອົງການ ສປຊ ດ້ານອາຫານ ແລະ ການກະສິກຳ, 2012.

ກົດໝາຍວ່າດ້ວຍແຮງງານ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, 2009.

ນະໂຍບາຍທີ່ດິນແຫ່ງຊາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, 2013.

ກົດໝາຍວ່າດ້ວຍທີ່ດິນ, ສະພາແຫ່ງຊາດ, 2003.